ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 481 /ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 15. 4. 2020

ດ່ວນທີ່ສຸດ

# ແຈ້ງການ

ຮຽນ: - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າ ທີ່ນັບຖື.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງທົ່ວປະເທດ.

ເລື່ອງ: ການຕໍ່ເວລາ ແລະ ການແນະນຳເພີ່ມເຕີມ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19.

- ອີງຕາມການລາຍງານ ຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19 ຕໍ່ກອງປະຊຸມທົບທວນ ແລະ ປະເມີນຄືນ ການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.
- ອີງຕາມທິດຊີ້ນຳ ຂອງທ່ານນາຍົກລັດຖະມົນຕີ ຄັ້ງວັນທີ 15 ພຶດສະພາ 2020.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງ ມາຍັງທ່ານ ຊາບດັ່ງນີ້: ຜ່ານການຈັດຕັ້ງປະຕິບັດຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ ໂຄວິດ-19 ໃນໄລຍະຜ່ານມາ, ຄະນະສະເພາະກິດ, ບັນດາຂະແໜງການທີ່ກ່ຽວຂ້ອງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ໄດ້ເອົາໃຈໃສ່ ແລະ ສຸມທຸກກຳລັງເຂົ້າໃນການຈັດຕັ້ງປະຕິບັດຄຳສັ່ງສະບັບດັ່ງກ່າວ ຢ່າງມີປະສິດທິຜົນດີ, ທຸກຄົນໃນສັງຄົມໄດ້ເຂົ້າຮ່ວມ ແລະ ຮັບຜິດຊອບ ຕາມພາລະບົດບາດຂອງຕົນເອງ ແຕ່ເທິງລົງລຸ່ມ, ສ້າງໄດ້ຂະບວນການທີ່ເປັນຮູບປະທຳຢ່າງແທ້ຈິງ, ບັນດາອົງການຈັດຕັ້ງສາກົນ ແລະ ປະເທດຕ່າງໆ ກໍໄດ້ຕີລາຄາສູງວ່າ ສປປ ລາວ ມີມາດຕະການປ້ອງກັນແຕ່ຫົວທີໄດ້ດີ ຈຶ່ງສາມາດຄວບຄຸມການລະບາດ ບໍ່ໃຫ້ຂະຫຍາຍອອກສູ່ວົງກວ້າງ.

ເຖິງແນວໃດກໍຕາມ ອີງຕາມການລາຍງານ ຂອງຄະນະສະເພາະກິດ, ສະພາບການແຜ່ລະບາດ ຂອງພະຍາດໂຄວິດ-19 ຢູ່ຕ່າງປະເທດ ຍັງສືບຕໍ່ເພີ່ມຂຶ້ນ ແລະ ພາຍໃນ ສປປ ລາວ ພວກເຮົາ ກໍຍັງຈະມີຄວາມສ່ຽງ ແລະ ສິ່ງທ້າທາຍຈຳນວນບໍ່ໜ້ອຍ. ສະນັ້ນ, ລັດຖະບານ ຈຶ່ງໄດ້ຕົກລົງ ແລະ ຊີ້ນຳ ຄືດັ່ງນີ້:

1) ເຫັນດີໃຫ້ຕໍ່ເວລາ ໃນການຈັດຕັ້ງປະຕິບັດຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020, ບັນດານິຕິກຳ, ຄຳແນະນຳ, ແຈ້ງການ ຂອງຄະນະສະເພາະກິດໃນການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງໂຄວິດ-19, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແລະ ຂະແໜງການທີ່ກ່ຽວຂ້ອງ ອອກໄປ



Scanned with CamScanner

ຕື່ມອີກ 14 ວັນ ຈົນຮອດວັນທີ 03 ພຶດສະພາ 2020 ຢ່າງຖືກຕ້ອງ ແລະ ເຂັ້ມງວດ. ຖ້າມີການປ່ຽນແປງແນວໃດ ລັດຖະບານ ຈະແຈ້ງໃຫ້ຊາບຕາມພາຍຫຼັງ.

2) ກ່ຽວກັບໄລຍະເວລາເປີດໂຮງຮຽນນັ້ນ, ໃຫ້ລໍຖ້າການປະເມີນສະພາບການລະບາດ ຂອງພະຍາດພາຍຫຼັງຕໍ່ເວລາການປະຕິບັດຄໍາສັ່ງເລກທີ 06/ນຍ ໄປຕື່ມ 14 ວັນ ກ່ອນ, ແລ້ວຈຶ່ງໃຫ້ກະຊວງສຶກສາທິການ ແລະ ກິລາ ປຶກສາຫາລືກັບຄະນະສະເພາະກິດໃຫ້ລະອຽດຕື່ມ, ຈາກນັ້ນ ຈຶ່ງສະເໜີລັດຖະບານ ພິຈາລະນາຕົກລົງ ວ່າ ຈະເລີ່ມເປີດຮຽນແຕ່ລະຊັ້ນ ໄດ້ເມື່ອໃດ ເພື່ອຮັບປະກັນວ່າ ຈະບໍ່ມີຄວາມສ່ຽງຕໍ່ການຕິດເຊື້ອ ທັງສ້າງຄວາມໝັ້ນໃຈ ແລະ ອຸ່ນອຽນໃຈໃຫ້ນັກຮຽນ ກໍຄືພໍ່ແມ່ຜູ້ປົກຄອງ.

3) ສໍາລັບການປະຕິບັດໜ້າທີ່ ແລະ ການປະຈໍາການ ຂອງພະນັກງານລັດຖະກອນ ແມ່ນໃຫ້ສືບຕໍ່ຈໍາກັດຈໍານວນພະນັກງານ ໄປປະຈໍາການຢູ່ສໍານັກງານອົງການຄືດັ່ງຜ່ານມາ ໂດຍໃຫ້ແບ່ງເປັນຈຸ ແລະ ຜັດປ່ຽນກັນໄປປະຈໍາການ, ຜູ້ທີ່ບໍ່ໄດ້ໄປປະຈໍາການຢູ່ສໍານັກງານອົງການ ກໍໃຫ້ເຮັດວຽກຢູ່ເຮືອນ ໂດຍຕິດຕໍ່ພົວພັນ ແລະ ແກ້ວຽກຜ່ານລະບົບໂທລະສັບມືຖື ແລະ ລະບົບອອນລາຍ, ຫ້າມເດັດຂາດບໍ່ໃຫ້ສວຍໂອກາດໄປວຽກສ່ວນຕົວທາງອື່ນ ໃນໂມງລັດຖະການ ເພື່ອຮັບປະກັນເຮັດຫຼ້ອນໜ້າທີ່ທີ່ການຈັດຕັ້ງໄດ້ຮັບການມອບໝາຍໃຫ້.

4) ໃຫ້ສືບຕໍ່ເພີ່ມທະວີຄວາມເຂັ້ມງວດ ໃນການປະຕິບັດມາດຕະການຕ່າງໆ ທີ່ກໍານົດໃນຄໍາສັ່ງເລກທີ 06/ນຍ ແລ້ວ, ແຕ່ເຫັນວ່າ ຜ່ານມາພາກສ່ວນຕ່າງໆ ຍັງບໍ່ທັນປະຕິບັດໄດ້ດີເທົ່າທີ່ຄວນ ເປັນຕົ້ນ:

- ມາດຕະການຫ້າມອອກຈາກເຮືອນ ຫຼື ບ່ອນພັກອາໄສ, ຫ້າມໄປເຂດທີ່ມີຄວາມສ່ຽງໃນການຕິດເຊື້ອ. ສ່ວນການໄປທໍາການຜະລິດກະສິກໍາ, ໄປນາ, ໄປສວນ ແລະ ໄປທໍາມາຫາກິນຂອງປະຊົນ ແມ່ນສາມາດໄປໄດ້, ແຕ່ໃຫ້ອໍານາດການປົກຄອງບ້ານ ເປັນຜູ້ຄຸ້ມຄອງ ຢ່າງຮັດກຸມ ເພື່ອຫຼີກລ່ຽງຄວາມສ່ຽງໃນການຕິດເຊື້ອ.
- ມາດຕະການຫ້າມການຊຸມແຊວ ທີ່ມີຈໍານວນຄົນເກີນ 10 ຄົນຂຶ້ນໄປ ແລະ ການຈັດງານທຸກປະເພດ.

5) ໃຫ້ຄະນະສະເພາະກິດ, ບັນດາກະຊວງການທີ່ກ່ຽວຂ້ອງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ເປັນພິເສດຕໍ່ການຈັດຕັ້ງປະຕິບັດບາງວຽກງານຈໍານວນໜຶ່ງ ຕາມທີ່ໄດ້ລະບຸໄວ້ໃນຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ແຈ້ງການແນະນໍາເພີ່ມເຕີມໃນການປະຕິບັດຄໍາສັ່ງດັ່ງກ່າວ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 461/ຫສນຍ, ລົງວັນທີ 8 ເມສາ 2020 ແລະ ນິຕິກໍາແນະນໍາ ຂອງຄະນະສະເພາະກິດ ແລະ ກະຊວງການທີ່ກ່ຽວຂ້ອງວາງອອກ ໃນໄລຍະຜ່ານມາ ເຊັ່ນ: ວຽກງານການຄຸ້ມຄອງລາຄາສິນຄ້າ, ວຽກງານການສົ່ງເສີມການຜະລິດກະສິກໍາເປັນສິນຄ້າ ໂດຍສະເພາະການຜະລິດສະບຽງອາຫານ, ວຽກງານການຂົນສົ່ງສິນຄ້າຜ່ານແດນ ແລະ ຂົນສົ່ງສິນຄ້າລະຫວ່າງແຂວງຕໍ່ແຂວງ, ເມືອງຕໍ່ເມືອງ, ວຽກງານການຄຸ້ມຄອງແຮງງານ ທີ່ກັບມາຈາກຕ່າງປະເທດ ແລະ ວຽກງານການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ເພື່ອຕອບໂຕ້ ແລະ ຕີຖອຍ ຂ່າວລວງ, ຂ່າວລື, ຂ່າວອະກຸສົນ ແລະ ຂ່າວປັ່ນປ່ວນ.

6) ກ່ຽວກັບການຮັບເອົາການຊ່ວຍເຫຼືອຈາກຕ່າງປະເທດນັ້ນ ໃຫ້ຄະນະສະເພາະກິດ ແລະ ກະຊວງການກ່ຽວຂ້ອງ ສືບຕໍ່ຈັດຕັ້ງປະຕິບັດຕາມທິດຊີ້ນໍາ ຂອງລັດຖະບານ ທີ່ລະບຸໃນຂໍ້ທີ 6 ຂອງແຈ້ງການຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບສະບັບເລກທີ 461/ຫສນຍ, ລົງວັນທີ 8 ເມສາ 2020 ໂດຍໃຫ້ອີງໃສ່ຄວາມຕ້ອງການຕົວຈິງຂອງປະເທດ.

7) ເຫັນດີໃຫ້ມີການໂຍະຍານບາງມາດຕະການທີ່ ຕິດພັນກັບການເຄື່ອນໄຫວ ຂອງພາກທຸລະກິດ ໂດຍສະເພາະແມ່ນບັນດາໂຄງການ ຫຼື ກິດຈະການ ທີ່ມີຄວາມຈໍາເປັນຈໍານວນໜຶ່ງ ເພື່ອເປັນການຫຼຸດຜ່ອນຜົນກະທົບຈາກການຕໍ່ເວລາການຈັດຕັ້ງປະຕິບັດຄໍາສັ່ງເລກທີ 06/ນຍ ຕໍ່ເສດຖະກິດຂອງລາວ, ແຕ່ຕ້ອງບົນພື້ນຖານມີຄວາມຮັບປະກັນບໍ່ໃຫ້ມີຄວາມສ່ຽງໃນການຕິດເຊື້ອ. ສະນັ້ນ, ຈຶ່ງເຫັນຄວນມອບໃຫ້ຄະນະສະເພາະກິດ ທັງສອງຄະນະ ແລະ ກະຊວງການກ່ຽວຂ້ອງ ຮີບ



Scanned with CamScanner

ຮ້ອນສົມທົບກັບກໍານົດເງື່ອນໄຂ ແລະ ມາດຕະການປ້ອງກັນຄວາມສ່ຽງຕ່າງໆ ໂດຍໃຫ້ສ້າງເປັນນິຕິກໍາແນະນໍາ ຢ່າງລະອຽດ. ສໍາລັບການໂຄສະນາຕົວຈິງ ແມ່ນໃຫ້ລົງກວດກາເປັນແຕ່ລະກໍລະນີ, ຖ້າກໍລະນີໃດ ປະຕິບັດຖືກຕ້ອງຕາມເງື່ອນໄຂ ແລະ ມາດຖານທີ່ຄະນະສະເພາະກິດວາງອອກ ຈຶ່ງອະນຸຍາດໃຫ້ເຄື່ອນໄຫວ.

8) ເຫັນດີໃຫ້ປະຕິບັດນະໂຍບາຍເງິນອຸດໜູນໃຫ້ພະນັກງານແພດໝໍ, ເຈົ້າໜ້າທີ່ ປກສ-ປກຊ ແລະ ພະນັກງານລັດຖະກອນ ທີ່ປະຕິບັດໜ້າທີ່ຕົວຈິງ ໃນການປ້ອງກັນ ແລະ ຮັບມືກັບການລະບາດ ຂອງພະຍາດໂຄວິດ-19 ຕາມຄວາມເໝາະສົມ ໂດຍສອດຄ່ອງກັບລະບຽບການ ເພື່ອເປັນການໃຫ້ກໍາລັງໃຈແກ່ບຸກຄົນເຫຼົ່ານັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການ ສະບັບນີ້ດ້ວຍ.

ລັດຖະມົນຕີ,

ຫົວໜ້າຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

<u>ບ່ອນນໍາສົ່ງ:</u>

| | |
|---|---|
| 1. ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| 2. ຫ້ອງວ່າການສູນກາງພັກ | 01 ສະບັບ |
| 3. ບັນດາສະມາຊິກລັດຖະບານ ທ່ານລະ | 01 ສະບັບ |
| 4. ອົງການຈັດຕັ້ງພັກ ບ່ອນລະ | 01 ສະບັບ |
| 5. ສູນກາງແນວລາວສ້າງຊາດ | 01 ສະບັບ |
| 6. ອົງການຈັດຕັ້ງມະຫາຊົນ | 01 ສະບັບ |
| 7. ກົມກວດກາ, ຫສນຍ | 01 ສະບັບ |
| 8. ກົມຄົ້ນຄວ້າ-ສັງລວມ, ຫສນຍ | 01 ສະບັບ |
| 9. ສໍາເນົາ | 01 ສະບັບ |



Scanned with CamScanner